ຂ່າວ
ປິດຂ່າວ

Empowered lives.
Resilient nations.

# ສາທາລະນະລັດ ເກົາຫຼີ ສືບຕໍ່ໃຫ້ການສະໜັບສະໜູນຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ

**ນະຄອນຫຼວງວຽງຈັນ, 14 ພຶດສະພາ 2019** –

ອົງການຮ່ວມມືສາກົນເກົາຫຼີ (ກອຍກາ), ຄະນະກໍາມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ (ສປຊ ເພື່ອການພັດທະນາ) ໄດ້ຈັດ ພິທີເຊັນຂໍ້ຕົກລົງການສະໜອງທຶນຊ່ວຍເຫຼືອໃຫ້ແກ່ໂຄງການ 'ໂຄງການສະໜັບສະໜູນຂະແໜງການແກ້ໄຂບັນຫາ ລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ໄລຍະ 2) (2019-2022/5.5 ລ້ານໂດລາສະຫະລັດ)' ໃນວັນທີ 14 ພຶດສະພານີ້ ທີ່ນະຄອນຫຼວງວຽງຈັນ.

ໂດຍມີ ທ່ານ ນາງ ລີ ມີຄຢຸງ ປະທານອົງການຮ່ວມມືສາກົນເກົາຫຼີ, ທ່ານ ຊິນ ຊຸງຊຸນ ເອກອັກຄະລັດຖະທູດ ແຫ່ງສາທາລະນະລັດເກົາຫຼີ, ທ່ານນາງ ໃບຄໍາ ຂັດຕິຍະ ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ທ່ານ ໂອ ຊຸງຊູ ຜູ້ຕາງໜ້າອົງການຮ່ວມມືສາກົນເກົາຫຼີປະຈໍາລາວ, ທ່ານ ນາງ ຣິຄາດາ ຣິເອເຈີ ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາ ປະຈໍາລາວ, ທ່ານ ບຸນເພັງ ສີສະຫວັດ ຮັກສາການຫົວໜ້າຫ້ອງການ ຄຊກລ ແລະ ພາກສ່ວນຄູ່ຮ່ວມງານອື່ນໆໄດ້ ເຂົ້າຮ່ວມໃນພິທີດັ່ງກ່າວ.

ໃນພິທີດັ່ງກ່າວ, ທ່ານນາງ ລີ ມີຄຢຸງ ໄດ້ກ່າວວ່າ: "ຂ້າພະເຈົ້າດີໃຈທີ່ອົງການກອຍກາ ສືບຕໍ່ໃຫ້ທຶນຊ່ວຍເຫຼືອແກ່ຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ໂດຍຜ່ານໄລຍະທີ 2 ຂອງໂຄງການ". ນອກຈາກນີ້, ທ່ານຍັງກ່າວຕື່ມວ່າ ເລີ່ມແຕ່ປີຜ່ານມາ "ລັດຖະບານສາທາລະນະລັດເກົາຫຼີ ມີເປົ້າໝາຍປະກອບສ່ວນຕໍ່ກັບການພັດທະນາ ຂອງບັນດາປະເທດ ທີ່ເປັນຄູ່ຮ່ວມມືກັບອົງການກອຍກາ ໂດຍສຸມໃສ່ຍຸດທະສາດ 3p (ຄົນ, ສັນຕິພາບ, ຄວາມຈະເລີນຜາສຸກ). ເພາະສະນັ້ນ, ອົງການກອຍກາ ຫວັງວ່າຈະປະກອບສ່ວນຕໍ່ກັບການສ້າງສັນຕິພາບ ຢູ່ໃນ ສປປ ລາວ, ຍົກລະດັບຄຸນນະພາບຊີວິດຂອງຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກ ແລະ ບັນລຸເປົ້າໝາຍ 'ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ' ເຊິ່ງເປັນເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ ຂອງ ສປປ ລາວ (ເປົ້າໝາຍທີ 18)."

ພາຍໃຕ້ເອກະສານທີ່ໄດ້ລົງນາມຮ່ວມກັນ, ອົງການກອຍກາ ຈະສະໜອງທຶນເປັນ 2 ສ່ວນຄື: 3 ລ້ານໂດລາສະຫະລັດ ຈະຖືກຈັດຕັ້ງປະຕິບັດໂດຍ ການຮ່ວມມືກັບ ອົງການສະຫະປະຊາຊາດ ເພື່ອການພັດທະນາ (ສປຊ ເພື່ອການພັດທະນາ), ແລະ 2.5 ລ້ານໂດລາສະຫະລັດ ຈະຈັດຕັ້ງປະຕິບັດການຮ່ວມມືແບບສອງຝ່າຍເພື່ອນໍາໃຊ້ເຂົ້າໃນການຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ.

ນີ້ເປັນການສະໜອງທຶນໃນໄລຍະທີສອງທີ່ອົງການກອຍກາ ໄດ້ສະໜອງທຶນໃຫ້ແກ່ຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ. ການສະໜັບສະໜູນດັ່ງກ່າວນີ້ແມ່ນເພື່ອສືບຕໍ່ວຽກຈາກໄລຍະທຳອິດ ທີ່ໄດ້ຈັດຕັ້ງປະຕິບັດໃນລະຫວ່າງປີ 2015-2018 ເຊິ່ງໄດ້ສະໜັບສະໜູນ ໃຫ້ແກ່ຫ້ອງການຄະນະກຳມະການ ຄຊກລ ເພື່ອປະຕິບັດພາລະກິດຂອງຕົນໃນການປະສານງານກ່ຽວກັບວຽກການຄຸ້ມຄອງຂະແໜງການ ລບຕ ຢູ່ ສປປ ລາວ. ອົງການກອຍກາຈະສືບຕໍ່ສະໜັບສະໜູນຄວາມຕ້ອງການດ້ານການຝຶກອົບຮົມພ້ອມທັງອຸປະກອນທີ່ຈຳເປັນ ແລະ ສະໜອງທຶນສຳລັບການປະຕິບັດງານໃຫ້ແກ່ ກອງກວດກູ້ລະເບີດບໍ່ທັນແຕກເພື່ອມະນຸດສະທຳກອງທັບ ເພື່ອປະຕິບັດງານຢູ່ໃນແຂວງບໍລິຄຳໄຊ ເຊິ່ງຍັງເປັນພື້ນທີ່ ທີ່ຍັງບໍ່ທັນມີອົງການກວດກູ້ ເພື່ອມະນຸດສະທຳໃດຈັດຕັ້ງປະຕິບັດເທື່ອ.

ອົງການກອຍກາ ແລະ ອົງການ ສປຊ ປະຈຳລາວ ຍັງໄດ້ເຄີຍເຮັດວຽກການພັດທະນາຊົນນະບົດຮ່ວມກັນຢູ່ແຂວງສາລະວັນ. ນອກຈາກນີ້, ສາທາລະນະລັດເກົາຫຼີ ຍັງໄດ້ສະໜອງບັນດາຊ່ຽວຊານໃຫ້ແກ່ອົງການ ສປຊ ເພື່ອການພັດທະນາ ໂດຍຜ່ານຊ່ອງ ທາງຕ່າງໆ ລວມທັງພະນັກງານກ່ຽວກັບແຜນງານການຮ່ວມມືຫຼາຍຝ່າຍຂອງອົງການກອຍກາ ແລະ ແຜນງານອາສາ ສະໝັກຂອງອົງການ ສປຊ.

ກິດຈະກຳເຫຼົ່ານີ້ ແມ່ນຊ່ວຍໃຫ້ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ໂດຍສະເພາະແມ່ນໂຄງການທີ່ກ່ຽວຂ້ອງກັບການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງເປັນເປົ້າໝາຍຂອງການພັດທະນາແຫ່ງຊາດ ແບບຍືນຍົງຂອງ ສປປ ລາວ ຊຶ່ງເປັນເປົ້າໝາຍລຳດັບທີ 18: ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ. ທ່ານ ນາງ ຣິຄາດາ ຣິເອເກີ, ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາ ໄດ້ກ່າວວ່າ: "ລະເບີດບໍ່ທັນແຕກທີ່ຕົກຄ້າງເປັນອຸປະສັກຕໍ່ການຫຼຸດຜ່ອນຄວາມທຸກ ຍາກ ແລະ ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ. ອົງການ ສປຊ ເພື່ອການພັດທະນາ ມີການຮ່ວມມືກັບລັດຖະ ບານ ໃນຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ເປັນເວລາດົນນານມາແລ້ວ ແລະ ພວກເຮົາດີໃຈທີ່ໄດ້ສືບຕໍ່ເຮັດວຽກຮ່ວມກັບອົງການກອຍກາ ເພື່ອຮັບປະກັນວ່າ ການສະໜອງທຶນ ແລະ ຄວາມພະຍາຍາມຕ່າງໆ ຈະສາມາດບັນລຸບັນດາຄາດໝາຍ ຂອງເປົ້າໝາຍການພັດທະນາແບບຍືນຍົງລຳດັບທີ 18 ໃຫ້ຫຼາຍທີ່ສຸດ".

**ສໍາລັບຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່:**

*ອິດີໂກ ຮາໂມສ-ໂຊໂລ*
*ຊ່ຽວຊານການສື່ສານ, ອົງການ UNDP Lao PDR*
*ໂທ: 020 7717 7913, ອີເມວ: ildiko.hamos@one.un.org*

*ສົມລິດ ຄູນປະເສີດ*
*ຜູ້ຊ່ວຍການສື່ສານ, ອົງການ UNDP Lao PDR*
*ໂທ: 20 777 118 74, ອີເມວ: somlith.khounpaseuth@undp.org*